## Special Economic Zone, lecture eleventh: Rights and Obligations of developers

1. **ສິດ ແລະ ພັດທະຂອງຜູ້ພັດທະນາ ເຂດເສດຖະກິດພິເສດ**

### 1.1 ສິດຂອງຜູ້ພັດທະນາເຂດ

ຜູ້ພັດທະນາທີ່ໄດ້ຮັບອະນຸມັດຈາກລັດຖະບານ ໃນການພັດທະນາເຂດເສດຖະກິດພິເສດ ຈະໄດ້ຮັບສິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ດຳລັດ ແລະ ການຕົກລົງລະຫວ່າງລັດລັດຖະບານ ແລະ ຜູ້ພັດທະນາເຂດດັ່ງນີ້:

1) ໄດ້ຮັບການສົ່ງເສີມພິເສດ ແລະ ອຳນວຍຄວາມສະດວກ ໃນການພັດທະນາເຂດເສດຖະກິດພິເສດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
2) ໄດ້ຮັບການປົກປ້ອງການລົງທຶນ ລວມທັງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນ ຂອງຕົນ;
3) ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
4) ນຳໃຊ້ທີ່ດິນຕາມອາຍຸສັນຍາພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
5) ເປັນເຈົ້າກຳມະສິດຕໍ່ຊັບສິນຕົນ, ເປັນຕົ້ນ ຕຶກ, ອາຄານ ຫຼື ສິ່ງປຸກສ້າງ ໃນທີ່ດິນທີ່ໄດ້ຮັບສຳປະທານ, ມີສິດໂອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;
6) ເປີດບັນຊີເປັນເງິນກີບ ຫຼື ເງິນຕາຕ່າງປະເທດຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ;
7) ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.[1]

ຜູ້ພັດທະນາເຂດເສດຖະກິດພິເສດ ຈະໄດ້ຮັບການສົ່ງເສີມພິເສດ ແລະ ອຳນວຍຄວາມສະດວກໃນການພັດທະນາເຂດເສດເສດຖະກິດພິເສດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ, ຊຶ່ງໃນປັດຈຸບັນ ສປປລາວ ມີນະໂຍບາຍສົ່ງເສີມການລົງທຶນ ເພື່ອຊຸກຍູ້ ແລະ ກະຕຸ້ນໃຫ້ທຸກຫົວໜ່ວຍທຸລະກິດ ໄດ້ລົງທຶນໃນທຸກຂະແໜງການ ເພື່ອເຮັດໃຫ້ເສດຖະກິດມີການຂະຫຍາຍຕົວ ແລະ ເຕີບໂຕ, ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນ ໂດຍສະເພາະແມ່ນການພັດທະນາພື້ນຖານໂຄງລ່າງ, ລະບົບໄຟຟ້າ, ນ້ຳປະປາ, ຖະໜົນຫົນທາງ, ລະບຽບກົດໝາຍ, ເຕັກໂນໂຊຊີ, ອຸດສະຫະກຳສະຫະກຳຕ່າງໆ ເພື່ອອຳນວຍຄວາມສະດວກ ແລະ ຮອງຮັບໃຫ້ແກ່ການລົງທຶນຂອງນັກລົງທຶນພາຍໃນແລະ ຕ່າງປະເທດ, ຊຶ່ງການສ້າງຕັ້ງເຂດເສດຖະກິດພິເສດ ກໍ່ເປັນໜຶ່ງໃນໂຄງການທີ່ມີຄວາມສຳຄັນ ແລະ ເປັນການລົງທຶນຂະໜາດໃຫ່ຍ ທີ່ລັດຖະບາຍໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ເປັນພິເສດ, ເນື່ອງຈາກວ່າເປັນການພັດທະນາພື້ນຖານໂຄງລ່າງ ສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກໃຫ້ແກ່ການລົງທຶນ ດ້ວຍເຫດນີ້, ລັດຖະບານຈຶ່ງມີນະໂຍບາຍພິເສດໃຫ້ແກ່ຜູ້ພັດທະນາເສດຖະກິດພິເສດ ເປັນຕົ້ນແມ່ນ ນະໂຍບາຍຫຼຸດຜ່ອນພາສີອາກອນ ໃນການນ້ຳເຂົ້າວັດຖຸອຸປະກອນທີ່ນຳໃຊ້ເຂົ້າໃນການພັດທະນາພື້ນຖານໂຄງລ່າງ ຫຼື ອຸປະກອນທີ່ນຳໃຊ້ເຂົ້າໃນການພັດທະນາ ເປັນຕົ້ນແມ່ນ ເຕັກໂນໂລຊີ ທີ່ທັນສະໄໝ, ແຮງງານທີ່ມີສີມືຈາກຕ່າງປະເທດ , ຜູ້ພັດທະນາທີ່ມີຈຸດປະສົງທີ່ຈະນຳເຂົ້າຊິ້ນສ່ວນອຸປະກອນ ເຊັ່ນ: ກົນຈັກ ຫຼື ພາຫະນະທີ່ນຳໃຊ້ເຂົ້າໃນການພັດທະນາເຂດແມ່ນ ຈະໄດ້ຮັບນະໂຍບາຍຍົກເວັ້ນທາງດ້ານພາສີອາກອນ, ຊຶ່ງນະໂຍາຍທີ່ໄດ້ຮັບການຍົກເວັ້ນນັ້ນ ແມ່ນຕ້ອງໄດ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ການການຕົກລົງຂອງລັດຖະບານ. ຊຶ່ງນະໂນຍາຍຂອງແຕ່ລະເຂດເສດຖະກິດພິເສດນັ້ນ ແມ່ນມີຄວາມແຕກຕ່າງກັນ ເນື່ອງຈາກວ່າແຕ່ລະເຂດມີຄວາມສະດວກ ແລະ ຄວາມຫຍຸ້ງຍາກທີ່ແຕກຕ່າງກັນ.

---

[1] ດຳລັດ ວ່າດ້ວຍເຂດເສດຖະກິດພິເສດ, ມາດຕາ 20-21 ໜ້າທີ 06, ສະບັບເລກທີ 188/ລບ, ລົງວັນທີ 07.06.2018

ຜູ້ພັດທະນາເຂດ ຈະໄດ້ຮັບການປົກປ້ອງການລົງທຶນ ລວມທັງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາການລົງທຶນຂອງຕົນ, ໃນການລົງທຶນພັດທະນາເຂດເສດຖະກິດພະເສດນັ້ນ, ຜູ້ພັດທະນາ ຈະດຳເດີນການພັດທະນາຕາມແຜນການພັດທະນາທີ່ໄດ້ຮັບການຮັບຮອງ ແລະ ດຳເນີນໄປຕາມກຳນົດເວລາທີ່ໄດ້ມີການຕົກລົງກັບລັດຖະບານ, ຕະຫຼອດໄລຍະເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສັນຍາ ຜູ້ັດທະນາມີສິດ ໄດ້ຮັບຜົນປະໂຫຍດ ຈາກການເຊົ່າ, ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ, ເປັນຕົ້ນຕຶກ, ອາຄານ ແລະ ສິ່ງປຸກສ້າງ ໃນທີ່ດິນທີ່ໄດ້ຮັບການສຳປະທານ, ມີສິດໂອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດຕາມກົດໝາຍ ແລະ ລະບຽບການ, ມີສິດນຳໃຊ້ທີ່ດິນຕາມອຸຍຸສັນຍາພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ. ສັງເກດເຫັນວ່າ ຜູ້ພັດທະນາ ສາມາດນຳໃຊ້ທີ່ດິນ ແລະ ເປັນເຈົ້າກຳມະສິດຕໍ່ຊັບສິນຕ່າງໆຕາມອາຍຸສັນຍາພັດທະນາ ຊຶ່ງໃນປັດຈຸບັນນີ້ນີ້ ກົດໝາຍໄດ້ກຳນົດອາຍຸໃນການສຳປະທານທີ່ດິນຈາກລັດຖະບານ ສູງສຸດ ແມ່ນບໍ່ເກີນ 50 ປີ ແລະ ສາມາດຕໍ່ໄດ້ຕາມການຕົກລົງຂອງລັດຖະບານ, ໝາຍຄວາມວ່າຕະຫຼອດໄລຍະເວລາ 50 ຜູ້ພັດທະນາ ຈະເປັນເຈົ້າກຳມະສິດ ຕໍ່ກັບຊັບສິນຕ່າງໆ ໃນເຂດເສດເສດຖະກິດພິເສດ, ມີສິດໂອນໃຫ້ບຸກຄົນບຸກຄົນພາຍໃນ ແລະ ຕ່າງປະເທດ ໂດຍສອດຄອ່ງກັບກົດໝາຍ ແລະ ລະບຽບການ, ຊຶ່ງກົດໝາຍໄດ້ກຳນົດວ່າ ຜູ້ພັດທະນາ ມີສິດໂອນໃຫ້ບຸກຄົນອື່ນເປັນຜູ້ສືບຕໍ່ພັດທະນາ ແຕ່ຕ້ອງພັດທະນາສຳເລັດເກີນກວ່າ 45% ຂອງແຜນແມ່ນບົດການພັດທະນາທີ່ໄດ້ເຊັນຮັບຮອງໂດຍລັດຖະບານ. ນອກຈາກນີ້, ຜູ້ພັດທະນາ ຍັງມີສິດ ເຊົ່າ ຫຼື ສຳປະສານທີ່ດິນທີ່ຢູ່ນອກເຂດເສດຖະກິດພິເສດຈາກລັດຖະບານ ແລະ ເປີດບັນຊີເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ຢູ່ ສປປ ລາວ.

ຈາກການສຶກສາດຳລັດ ວ່າດ້ວຍເຂດເສດຖະກິດພິເສດ ແລະ ກົດໝາຍຕ່າງໆ ທີ່ກ່ຽວຂ້ອງ ເຫັນວ່າ ລັດຖະບານມີນະໂຍບາຍສົ່ງເສີມພິເສດຕໍ່ຜູ້ພັດທະນາເຂດເສດຖະກິດພິເສດ, ເປັນຕົ້ນແມ່ນ ນະໂຍບາຍກ່ຽວກັບການນຳໃຊ້ທີ່ດິນ, ນະໂຍບາຍດ້ານພາສີອາກອນ  ແລະ ນະໂຍບາຍຕ່າງໆ. ນອກຈາກນີ້ຜູ້ພັດທະນາຈະໄດ້ຮັບສິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ລວມທັງໄດ້ຮັບການປົກປ້ອງຈາກການລົງທຶນ.

### 1.2 **ພັນທະຂອງຜູ້ພັດທະນາເຂດ**

ຜູ້ພັດທະນາເຂດເສດຖະກິດພິເສດ ນອກຈາກຈະໄດ້ຮັບສິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ດຳລັດແລ້ວ ຍັງຈະຕ້ອງໄດ້ປະຕິບັດຕາມພັນດັ່ງຕໍ່ໄປນີ້

1) ສ້າງຕັ້ງບໍລິສັດ ເພື່ອດຳເນີນໂຄງການຕາມສັນຍາພັດທະນາເຂດ;
2) ປະຕິບັດສັນຍາພັດທະນາ, ແຜນແມ່ບົດການພັດທະນາ, ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
3) ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຢ່າງຄົບຖ້ວນ ຕາມສັນຍາພັດທະນາ, ກົດໝາຍ ແລະ ລະບຽບການ;
4) ຮ່ວມມືກັບອົງການຈັດຕັ້ງປົກຄອງທ້ອງຖິ່ນ, ສົ່ງເສີມການມີສ່ວນຮ່ວມ ໃນການພັດທະນາຂອງປະຊາຊົນ ບ່ອນເຂດເສດຖະກິດພິເສດຕັ້ງຢູ່ ແລະ ປະກອບສ່ວນພັດທະນາທ້ອງຖິ່ນດັ່ງກ່າວ;
5) ສະເໜີຂໍອະນຸມັດນຳຄະນະຄຸ້ມຄອງເຂດ ຕາມລະບຽບການ ກ່ຽວກັບການລົງທຶນ ເພື່ອດຳເນີນກິດຈະການໃດໜຶ່ງ ຢູ່ໃນ ຂພສ;
6) ຖືບັນຊີຕາມກົດໝາຍ ວ່າດ້ວຍການບັນຊີ ຂອງ ສປປ ລາວ, ໃນກໍລະນີຈຳເປັນ ກໍ່ສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການເງິນ ຂອງ ສປປ ລາວ;
7) ສົ່ງເສີມການນຳໃຊ້ແຮງງານລາວ ໂດຍສະເພາະແຮງງານຍິງ ແລະ ຊົນເຜົ່າ, ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີ ໃຫ້ແກ່ຜູ້ອອກແຮງງານລາວ;

8) ປະກອບສ່ວນທາງດ້ານງົບປະມານ ໃນວຽກງານຕິດຕາມ, ກວດກາໂຄງການລົງທຶນ;

9) ສະຫຼຸບລາຍງານການດຳເນີນທຸລະກິດຂອງຕົນ ປະຈຳສາມເດືອນ, ຫົກເດືອນ ແລະ ປະຈຳປີ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ;

10) ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ[2].

ພາຍຫຼັງທີ່ຜູ້ພັດທະນາ ໄດ້ຮັບອະນຸມັດຈາກລັດຖະບານຢ່າງເປັນທາງການແລ້ວ ຕ້ອງໄດ້ຮີບຮ້ອນໃນການຈັດຕັ້ງປະຕິບັດການພັດທະນາເຂດເສດຖະກິດພິເສດ ຕາມແຜນການພັດທະນາ ຫຼື ສັນຍາການພັດທະນາ, ຜູ້ພັດທະນາຕ້ອງເປັນເຈົ້າການໃນການກະກຽມ ແລະ ລົງມືຈັດຕັ້ງປະຕິບັດ ຫຼື ສ້າງຕັ້ງບໍລິສັດເພື່ອດຳເນີນໂຄງການຕາມສັນຍາພັດທະນາ, ຕ້ອງໄດ້ປະຕິບັດຕາມວັນຍາພັດທະນາ, ແຜນແມ່ບົດການພັດທະນາ, ບົດວິພາເສດຖະກິດ-ເຕັກນິ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

ການສ້າງຕັ້ງ ແລະ ການພັດທະນາເຂດເສດຖະກິດພິເສດນັ້ນ ແມ່ນມີຄວາມຈຳເປັນ ແລະ ສຳຄັນໃນການພັດທະນາ ໂດຍສະເພາະແມ່ນການພັດທະນາ ເສດຖະກິດສັງຄົມ ເພາະວ່າເຂດດັ່ງກ່າວນີ້ ແມ່ນໄດ້ກຳນົດໃຫ້ເປັນເຂດຕົວເມືອງໃໝ່ ທີ່ທັນສະສະໄໝ ເປັນເຂດທີ່ນຳໃຊ້ນະວັດຕະກຳ ແລະ ເຕັກໂນໂລຊີທີ່ທັນສະໄໝ, ເປັນເຂດທີ່ຖ່າຍທອດເຕັກໂນໂລຊີທີ ແລະ ຄວາມຮູ້ໃຫ້ແກ່ຜູ້ອອກແຮງງານ ລາວ, ສະນັ້ນ ການພັດທະນານັ້ນຕ້ອງໄດ້ເອົາໃຈໃສ່ ແລະ ຮັບປະກັນໃຫ້ໄດ້ຕາມມາດຕະຖານ ແລະ ເຕັກນິກ ແລະ ບໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ຮັບປະກັນໃຫ້ສັງຄົມ ຫຼື ປະຊາຊົນທີ່ດຳລົງຊີວິດຢູ່ໃນທ້ອງຖິ່ນ ຫຼື ບ່ອນທີ່ເຂດເສດຖະກິດພິເສດຕັ້ງຢູ່ ໄດ້ຮັບມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກເຂດດັ່ງກ່າວ ແລະ ເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້ານັບບມືນັບດີຂຶ້ນ.

ການພັດທະນາພື້ນຖານໂຄງລ່າງຕ້ອງຮັບປະກັນໃຫ້ມີຄຸນນະພາບ ແລະ ໄດ້ຕາມມາດຕະຖາ ເພື່ອຮັບຮອງ ແລະ ສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນ ແລະ ບໍ່ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນທີ່ດຳລົງຊີວິດຢູ່ເຂດດັ່ງກ່າວ. ນອກຈາກນີ້, ຜູ້ພັດທະນາຕ້ອງເປັນເຈົ້າການໃນການ ປະຕິບັດທັນທະໃຫ້ແກ່ລັດ ເປັນຕົ້ນ ແມ່ນ ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຖ່າບໍລິການຢ່າງຄົບຖ້ວນ ຕາມສັນຍາພັດທະນາ, ກົດໝາຍ ແລະ ລະບຽບການ. ການປະຕິບັດພັນທະຂອງຜູ້ພັດທະນາ ຕໍລັດຕາມສັນຍາພັດທະນານັ້ນ ແມ່ນມີຄວາມສຳຄັນຫຼາຍ ຕໍ່ຜູ້ພັດທະນາ ເນື່ອງຈາກວ່າຜູ້ພັດທະນາທີປະຕິບັດພັນທະຢ່າງຄົບຖ້ວນໃຫ້ລັດ ຈະໄດ້ຮັບນະໂຍບາຍ ແລະ ສິດທິພິເສດ ເປັນຕົ້ນແມ່ນນະໂຍບາຍດ້ານພາສີອາກ່ອນ ແລະ ນະໂຍບາຍ ນຳໃຊ້ທີດິນ, ຊຶ່ງຜູ້ພັດທະນາອາດຈະຈະໄດ້ຮັບນະໂຍບາຍ ຫຼື ໄດ້ຮັບນະໂຍບາຍໃນການຕໍ່ອາຍຸສຳປະທານໃນເຂດເສດຖະກິດພິເສດ ຫພາຍຫຼັງທີສັນຍາພັດທະນາໄດ້ສິ້ນສຸດລົງ. ນອກຈາກນີ້, ກໍ່ຈະເປັນການປະກອບສ່ວນທີສຳຄັນໃນການຊ່ວຍລັດຖະບານໃນການພັດທະນາເສດຖະກິດສັງຄົມ ແລະ ເພີ່ມການປະກອບສ່ວນເຮັດໃຫ້ການດຳລົງຊີວິດຂອງປະຊາຊົນນັບມື້ນັບມີຄວາມກ້າວໜ້າ ແລະ ມີຊີວິດທີດີຂຶ້ນ. ຜູ້ພັດທະນາຕ້ອງໄດ້ຮ່ວມືກັບອົງການປົກຄອງທ້ອງຖິ່ນ, ສົ່ງເສີມການມີສ່ວນຮ່ວມ ໃນການພັດທະນາຂອງປະຊາຊົນຢູ່ໃນເຂດດັ່ງກ່າວ, ຊຶ່ງອົງການປົກຄອງທ້ອງຖິ່ນ ກໍ່ມີບົດບາດສຳຄັນ ໃນການປະກອບສ່ວນເຂົ້າໃນການພັດທະນາ ແລະ ປົກປັກຮັກສາ ຜົນປະໂຫຍດ ແລະ ປົກປ້ອງຜົນປະໂຫຍດອັນຊອບທຳຂອງຜູ້ພັດທະນາ ແລະ ສິດິນປະໂຫຍດອັບຊອບທຳຂອງປະຊາຊົນບັນດາເຜົ່າກ

ໃນການພັດທະນາເຂດເສດຖະກິດພິເສດ, ຜູ້ພັດທະນາຕ້ອງໄດ້ເອົາໃຈໃສ່ ແລະ ມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ປະກອບສ່ວນໃນການພັດທະນາທ້ອງຖິ່ນດັ່ງກ່າວ, ໝາຍຄວາມວ່າ ຕ້ອງໄດ້ເພີ່ມການມີສ່ວນຮ່ວມຂອງທ້ອງຖິ່ນ ແລະ ປົກປັກຮັກສາຮີດຄອງປະເພນີ ອັນດີງາມ, ຮັກສາຄວາມເປັນເອກະລັກຂອງທ້ອງ ຖິ່ນ ແລະ ເໜັ້ນການພັດທະນາແບບຍືນຍົງ. ການດຳເນີນກິດຈະການໃດໜຶ່ງ ຢູ່ໃນເຂດເສດຖະກິດພິເສດ ຜູ້ພັດທະນາຕ້ອງໄດ້ຂໍອະນຸມັດນຳຄະນະຄຸ້ມຄອງເຂດ ຕາມລະບຽບການ ກ່ຽວກັບການລົງທຶນ ແລະ ຖືບັນຊີຖືກຕ້ອງຕາມກົດໝາຍ ວ່າ

---

[2] ດຳລັດ ວ່າດ້ວຍເຂດເສດຖະກິດພິເສດ, ມາດຕາ 21 ໜ້າທີ 07, ສະບັບເລກທີ 188/ລບ, ລົງວັນທີ 07.06.2018

ດ້ວຍບັນຊີຂອງ ສປປ ລາວ. ການເອົາໃຈໃສ່ເລື່ອງການນໍາໃຊ້ແຮງງານໂດຍສະເພາະແມ່ນ ການນໍາໃຊ້ແຮງງານລາວໂດຍສະເພາະແຮງງານຍິງ ແລະ ຊົນເຜົ່າ ກໍ່ມີຄວາມສໍາຄັນທີ່ຜູ້ພັດທະນາຕ້ອງໄດ້ເອົາໃຈໃສ່ ໃນການນໍາໃຊ້ແຮງງານ ແລະ ຖ່າຍທອດເຕັກໂນໂລຊີໃຫ້ແຮງງານລາວ ເພື່ອໃຫ້ເຂົ້າເຈົ້າ ໄດ້ມີຄວາມຄວາມຊ່ຽວຊານ ແລະ ມີອາຊີບທີ່ໝັ້ນຄົງ. ນອກຈາກນີ້, ຜູ້ພັດທະນາກໍຍັງຕ້ອງປະຕິບັດພັນທະທາງດ້ານງົບປະມານ ໃນວຽກງານຕິດຕາມ ແລະ ກວດກາການລົງທຶນ ພ້ອມທັງສະຫຼຸບລາຍງານການດໍາເນີນທຸລະກິດຂອງຕົນ ປະຈໍາສາມເດືອນ, ຫົກເດືອນ ແລະ ປະຈໍາປີ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ແລະ ຂະແໜງການທີ່ກ່ຽວຂ້ອງ. ຊຶ່ງໃນປັດຈຸບັນນີ້, ທຸກການລົງທຶນ ແມ່ນຈະຕ້ອງໄດ້ຜ່ານ ຫ້ອງການການລົງທຶນປະຕູດຽວ, ຊຶ່ງຫ້ອງການການລົງທຶນປະຕູດຽວແມ່ນ ການບໍລິການ ແລະ ອໍານວຍຄວາມສະດວກໃຫ້ແກ່ວຽກງານການລົງທຶນ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວມີຄວາມສະດວກວ່ອງໄວ ແລະ ສະໜອງຂໍ້ມູນຂ່າວສານທາງດ້ານການລົງທຶນໃຫ້ແກ່ຜູ້ລົງທຶນ, ນອກຈາກນີ້ ຍັງເປັນຈຸດປະສານງານທີ່ສໍາຄັນ ໃນການປະສານງານກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ວຽກງານການລົງທຶນທຶນດໍາເນີນໄປຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ, ໃນຂະນະດຽວກັນ ກໍ່ເຮັດໜ້າທີ່ລາຍງານສະພາບການລົງທຶນ ຕໍ່ຄະນະຄຸ້ມຄອງ ແລະ ສົ່ງເສີມການລົງທຶນກໍຄືລາຍງານໃຫ້ລັດຖະບານໄດ້ຮັບຊາບເປັນແຕ່ລະໄລຍະກ່ຽວກັບການລົງທຶນໃນ ສປປລາວ.

ສະຫຼຸບລວມແລ້ວ, ສິດ ແລະ ພັນທະຂອງຜູ້ພັດທະນາ ເຂດເສດຖະກິດພິເສດ ການປະຕິບັດຕາມດໍາລັດວ່າດ້ວຍເຂດເສດຖະກິດພິເສດ, ແມ່ນການປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ ແລະ ປະຕິບັດຕາມແຜນແມ່ບົດການພັດທະນາເສດຖະກິດພິເສດ ທີ່ຜູ້ພັດທະນາ ແລະ ລັດຖະບານໄດ້ເຊັນຮັບຮອງຢ່າງເປັນທາງການ. ຜູ້ພັດທະນາຈະໄດ້ຮັບສິດ ແລະ ໄດ້ຮັບການປົກປ້ອງສິດຜົນປະໂຫຍດທີ່ເກີດຈາກການລົງທຶນ ແລະ ສິດອື່ນໆ ຕາມທີ່ໄດ້ອະທິບາຍມາຂ້າງເທິງ, ເຫັນໄດ້ວ່າ ລັດຖະບານໄດ້ອໍານວຍຄວາມສະດວກ ແລະ ໃຫ້ສິດແກ່ຜູ້ພັດທະນາຫຼາຍສົມຄວນ ໂດຍໄດ້ກໍານົດໄວ້ຢ່າງຊັດເຈນໃນດໍາລັດວ່າດ້ວຍ ເຂດເສດຖະກິດພິເສດ ແລະ ກົດໝາຍສົ່ງເສີມການລົງທຶນ. ແນວໃດກໍ່ຕາມ ນະໂຍບາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ ອາດຈະມີການປັບປຸງປ່ຽນແປງ ເພື່ອໃຫ້ແທດເໝາະ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ຄວາມຕ້ອງການຕົວຈິງຂອງການພັດທະນາເສດຖະກິດສັງຄົມ ແຕ່ລະໄລຍະ. ຊຶ່ງມັນສະແດງໃຫ້ເຫັນວ່າ ອາຍຸສໍາປະທານທີ່ດິນໃນການພັດທະນາເຂດເສດຖະກິດພິເສດໃນເມື່ອກ່ອນ ກົດໝາຍໄດ້ກໍານົດອາຍຸສໍາປະທານທີ່ດິນເປັນເວລາເຖິງ 90 ປີ ແຕ່ໃນປັດຈຸບັນນີ້, ກົດໝາຍສົ່ງເສີມການລົງທຶນໄດ້ກໍານົດນົດອາຍຸສໍາປະທານທີ່ດິນໃນການພັດທະນາ ຫຼື ອະນຸຍາດໃຫ້ເອກະຊົນ ສໍາປະທານທີ່ດິນ ສູງສຸດບໍ່ໃຫ້ເກີນ 50 ປີ. ເຖິງແມ່ນວ່າ ນະໂຍບາຍ ແລະ ກົດໝາຍຈະມີການປັບປຸງ ແຕ່ລັດບໍ່ມີການປົກປ້ອງ ແລະ ຮັບສາສິດຜົນປະໂຫຍດຂອງຜູ້ລົງທຶນ ແລະ ປະຕິບັດຕາມສັນຍາທີ່ລັດຖະບານໄດ້ເຊັນກັບຜູ້ພັດທະນາໃນໄລຍະຜ່ານມາ.

ຜູ້ພັດທະນາ ທີ່ດໍາເນີນການຈັດຕັ້ງປະຕິບັດການພັດທະນາເຂດເສດຖະກິດພິເສດ ຈະໄດ້ຮັບສິດ ແລະ ໄດ້ຮັບການປົກປ້ອງການລົງທຶນ ຕາມລະບຽບກົດໝາຍ ຂອງ ສປປ ລາວ. ນອກຈາກນີ້ ຍັງຕ້ອງໄດ້ປະຕິບັດພັນທະຕາມດໍາລັດ ແລະ ກົດໝາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ເປັນຕົ້ນແມ່ນພັນທະຕໍ່ລັດ, ພັນທະເສຍພາສີອາກອນ, ພັນທະໃນການປົກປັກຮັກສາສິ່ງແວດລ້ອມ ແລະ ພັນທະຕໍ່ສັງຄົມ, ພັນທະໃນການປະກອບສ່ວນດ້ານງົບປະມານໃນການຕິດຕາມການລົງທຶນ ແລະ ລາຍງານ ສະພາບການລົງທຶນໃນ ຂພສ. ພັນທະໃນການຖ່າຍທອດເຕັກໂນໂລຊີໃຫ້ແກ່ຜູ້ອອກແຮງງານລາວ ແລະ ພັນທະໃນການສົ່ງເສີມການວ່າຈ້າງແຮງງານຍິງ ແລະ ຊົນເຜົ່າ.

ໃນກໍລະນີທີ່ການພັດທະນາເຂດເສດຖະກິດພິເສດ ຫາກໄດ້ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ຜູ້ພັດທະນາມີພັນທະໃນການຟື້ນຟູ ແລະ ບໍາລຸງຮັກສາ ເຮັດໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ. ນອກຈາກນີ້, ກໍ່ຕ້ອງປະກອບສ່ວນເຂົ້າໃນການພັດທະນາສັງຄົມ ແລະ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນບ່ອນເຂດເສດຖະກິດພິເສດຕັ້ງຢູ່, ປົກປັກຮັກສາຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ ແລະ ເປັນເຈົ້າການໃນການຂຶ້ນແຜນ ແລະ ຈັດຕັ້ງປະຕິບັດໂຄງການໂດຍໃຫ້ປະຊາຊົນມີສ່ວນຮ່ວມ ແລະ ນໍາໃຊ້ແຮງງານທ້ອງຖິ່ນໃຫ້ຫຼາຍຂຶ້ນ.

ທີ່ຜ່ານມານັ້ນ ແມ່ນສິດ ແລະ ພັນທະຂອງຜູ້ພັດທະນາ ທີດຳດຳເນີນການພັດທະນາເຂດເສດຖະກິດພິເສດຢູ່ ສປປລາວ, ຊຶ່ງຜູ້ພັດທະນາຕ້ອງໄດ້ຮັບຮູ້ກ່ຽວກັບສິດທີຈະໄດ້ຮັບຕາມດຳລັດ ແລະ ກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ. ນອກຈາກນີ້ ກໍ່ຈະໄດ້ຮັບສິດ ແລະ ປະຕິບັດພັນທະອື່ນໆ ຕາມທີໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາການພັດທະນາລະຫວ່າງ ລັດຖະທະບານ ແລະ ຜູ້ພັດທະນາ.

**ເອກະສານອ້າງອີງ:**


1. ດຳລັດ ວ່າດ້ວຍເຂດເສດຖະກິດພິເສດ, ມາດຕາ 20-21 ໜ້າທີ 06, ສະບັບເລກທີ 188/ລບ, ລົງວັນທີ 07.06.2018
2. ດຳລັດ ວ່າດ້ວຍເຂດເສດຖະກິດພິເສດ, ມາດຕາ 21 ໜ້າທີ 07, ສະບັບເລກທີ 188/ລບ, ລົງວັນທີ 07.06.2018